# KAISER PERMANENTE

# ສະຫຼຸບນະໂຍບາຍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວ

ໂຄງການຊ່ວຍເຫຼືອທາງການເງິນສຳລັບການປິ່ນປົວ (Medical Financial Assistance, MFA) ຂອງ Kaiser Permanente ໃຫ້ການຊ່ວຍເຫຼືອທາງການເງິນສຳລັບຄົນເຈັບທີ່ມີເງື່ອນໄຂໄດ້ຮັບ ຊຶ່ງເປັນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຊ່ວຍຈ່າຍສຳລັບການເບິ່ງແຍງຮັກສາທີ່ສຸກເສີນ ຫຼື ຈຳເປັນທີ່ເຂົາເຈົ້າໄດ້ຮັບໃນສະຖານພະຍາບານຂອງ Kaiser Permanente ຫຼືໂດຍຜູ້ໃຫ້ບໍລິການຂອງ Kaiser Permanente. ບັນດາຄົນເຈັບສາມາດສະໝັກຂໍເຂົ້າໂຄງການ MFA ໄດ້ຫຼາຍທາງ ລວມເຖິງ ການໄປສະໝັກດ້ວຍຕົນເອງ, ສະໝັກທາງໂທຣະສັບ, ຫຼື ໂດຍການຍື່ນສົ່ງໃບສະໝັກທີ່ເປັນເຈ້ຍ. ຄົນເຈັບຕ້ອງມີເງື່ອນໄຂກົງຕາມຂໍ້ກຳນົດຂ້າງລຸ່ມນີ້ເພື່ອໃຫ້ມີສິດໄດ້ຮັບການຊ່ວຍເຫຼືອ.

**ໃຜມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນ ແລະຂໍ້ກຳນົດມີຫຍັງແດ່?**
ທາງໂຄງການຊ່ວຍເຫຼືອຜູ້ມີລາຍໄດ້ຕ່ຳ, ບໍ່ມີປະກັນພັຍ, ຫຼື ຄົນເຈັບທີ່ຂາດໂອກາດຊຶ່ງຕ້ອງການຄວາມຊ່ວຍເຫຼືອໃນການຊ່ວຍຈ່າຍຄ່າປິ່ນປົວ ໃນບາງສ່ວນ ຫຼື ທັງໝົດ. ໂດຍທົ່ວໄປແລ້ວ, ບັນດາຄົນເຈັບມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນເມື່ອລາຍໄດ້ລວມຂອງຄົວເຮືອນຢູ່ທີ່ລະດັບ ຫຼື ຕ່ຳກວ່າ 350% ຂອງລະດັບຄວາມຍາກຈົນທີ່ຣັຖານກາງກຳນົດໄວ້ (Federal Poverty Guidelines, FPG) ຫຼືມີຄ່າໃຊ້ຈ່າຍດ້ານການປິ່ນປົວທີ່ສູງເກີນປົກກະຕິ. ຄົນເຈັບຄວນປຶກສາກັບທີ່ປຶກສາດ້ານການເງິນເພື່ອພິຈາລະນາຕັດສິນການມີສິດໄດ້ຮັບ ແລະສຳລັບການຊ່ວຍເຫຼືອໃນການສະໝັກ.

*ບັນດາຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວນັ້ນຈະບໍ່ຖືກເກັບຄ່າກາຍຈຳນວນທີ່ເກັບທົ່ວໄປ (amounts generally billed, AGB) ສຳລັບຄ່າປິ່ນປົວສຸກເສີນ ຫຼືຄ່າເບິ່ງແຍງທີ່ຈຳເປັນທາງການແພດອື່ນໆ. ເບິ່ງທີ່ເວັບໄຊ* kp.org/mfa/scal *ສຳລັບຂໍ້ມູນ ເພີ່ມເຕີມກ່ຽວກັບ AGB.*

**Kaiser Permanente ກວດກັ່ນຕອງບັນດາຄົນເຈັບເພື່ອເບິ່ງການມີສິດໄດ້ຮັບສຳລັບໂຄງການຊ່ວຍເຫຼືອຂອງຣັຖ ແລະເອກະຊົນ ບໍ່?**
Kaiser Permanente ໃຫ້ການຊ່ວຍເຫຼືອແກ່ຄົນເຈັບໃນການກຳນົດຫາໂຄງການປະກັນພັຍຄຸ້ມຄອງສຸຂະພາບທັງຂອງຣັຖ ແລະເອກະຊົນ ທີ່ອາດຊ່ວຍໃນດ້ານຄວາມຕ້ອງການໃນການເຂົ້າເຖິງການເບິ່ງແຍງສຸຂະພາບ. ຄົນເຈັບທີ່ຄິດວ່າມີສິດທີ່ຈະໄດ້ຮັບປະກັນພັຍຄຸ້ມຄອງສຸຂະພາບຂອງຣັຖ ຫຼື ເອກະຊົນແມ່ນຈຳເປັນຕ້ອງສະໝັກເຂົ້າໂຄງການເຫຼົ່ານັ້ນ.

**ໂຄງການນີ້ແມ່ນຄຸ້ມຄອງຫຍັງແດ່?**
ໂຄງການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວ ຄຸ້ມຄອງຈ່າຍຄ່າເບິ່ງແຍງທີ່ຈຳເປັນທາງການແພດຊຶ່ງຈັດຫາໃຫ້ທີ່ຫ້ອງການແພດ, ໂຮງໝໍ, ຮ້ານຂາຍຢາຂອງ Kaiser Permanente ຫຼືຈັດຫາໃຫ້ໂດຍຜູ້ໃຫ້ບໍລິການຂອງ Kaiser Permanente. ປະເພດຂອງການບໍລິການທີ່ຢູ່ໃນພາຍໃຕ້ການຄຸ້ມຄອງ ໄດ້ແກ່ບັນດາບໍລິການທີ່ບໍ່ຖືວ່າເປັນເຫດສຸກເສີນ ຫຼື ບໍ່ ຈຳເປັນທາງການແພດໂດຍຜູ້ໃຫ້ບໍລິການຂອງ Kaiser Permanente, ການເຮັດໝັນ ແລະການບໍລິການຖືພາແທນ ແລະຄ່າງວດປະກັນພັຍສຸຂະພາບ. ກະຣຸນາເບິ່ງລາຍການທີ່ຄົບຖ້ວນຢູ່ໃນນະໂຍບາຍ MFA.

**ມີບໍລິການຊ່ວຍເຫຼືອດ້ານພາສາບໍ່?**
ມີນາຍພາສາໃຫ້ບໍລິການໂດຍທ່ານບໍ່ເສັຽຄ່າ. ໃບສະໝັກຂໍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວ, ນະໂຍບາຍ, ແລະສະຫຼຸບນະໂຍບາຍນີ້ອາດມີໃຫ້ໃນພາສາຂອງທ່ານ. ສຳລັບຂໍ້ມູນເພີ່ມເຕີມ, ໂທຣ 800-464-4000 ຫຼື ເບິ່ງທີ່ເວັບໄຊຂອງພວກເຮົາທີ່ kp.org/mfa/scal.

**Kaiser Permanente ມີນະໂຍບາຍການຊ່ວຍເຫຼືອທາງການເງິນບໍ່?**
ທ່ານສາມາດຮ້ອງຂໍສຳເນົາໄດ້ໂດຍບໍ່ເສັຽຄ່າກ່ຽວກັບນະໂຍບາຍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວຂອງ Kaiser Permanente ໂດຍໂທຣ 800-390-3507, ສົ່ງໄປສະນີທີ່ P.O. Box 7086, Pasadena, CA 91109-7086, ຫຼືເບິ່ງທີ່ເວັບໄຊຂອງພວກເຮົາທີ່ kp.org/mfa/scal.

**ຕ້ອງການຄວາມຊ່ວຍເຫຼືອບໍ່?**
ສຳລັບຄວາມຊ່ວຍເຫຼືອ ຫຼື ຄຳຖາມກ່ຽວກັບຂັ້ນຕອນການສະໝັກຂໍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວ, ກະຣຸນາໂທຣ 800-390-3507, ຫຼື ປຶກສາກັບທີ່ປຶກສາທາງການເງິນທີ່ພະແນກຮັບຄົນເຈັບຢູ່ທີ່ໂຮງໝໍໃດໆ ຂອງ Kaiser Permanente.

**ຂ້າພະເຈົ້າສະໝັກໄດ້ແນວໃດ?**
ທ່ານສາມາດສະໝັກຂໍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວໄດ້ໃນຫຼາຍທາງ -- ທັງໂດຍການໄປຂໍຂໍ້ມູນດ້ວຍຕົນເອງ ຫຼື ໂດຍທາງໂທຣະສັບ ຫຼື ໂດຍຂໍໃບສະໝັກທີ່ເປັນເຈັ້ຍ ຈາກແຫຼ່ງບໍລິການດັ່ງຕໍ່ໄປນີ້:

- ທີ່ປຶກສາທາງການເງິນທີ່ພະແນກຮັບຄົນເຈັບ ຫຼື ພະແນກສຸກເສີນ ຢູ່ທີ່ໂຮງໝໍໃດໆ ຂອງ Kaiser Permanente
- ໂທຣ 800-390-3507
- ໂດຍທາງໄປສະນີ (ບໍ່ເສັຽຄ່າ) ທີ່ P.O. Box 7086, Pasadena, CA 91109-7086
- ດາວໂຫລດໃບສະໝັກຜ່ານເວັບໄຊຊຸມຊົນຂອງ Kaiser Permanente ທີ່ kp.org/mfa/scal.

ກະຣຸນາສົ່ງຄືນໃບສະໝັກທີ່ປະກອບຄົບຖ້ວນແລ້ວ (ລວມເຖິງ ເອກະສານທີ່ຈຳເປັນທັງໝົດ ແລະຂໍ້ມູນທີ່ລະບຸໄວ້ໃນຄຳແນະນຳຂອງໃບສະໝັກ) ໄປທີ່ພະແນກຮັບຄົນເຈັບ ຫຼື ພະແນກສຸກເສີນຂອງໂຮງໝໍ Kaiser Permanente ທີ່ຢູ່ໃກ້ທີ່ສຸດ ຫຼື ສົ່ງໄປສະນີໄປທີ່: MFA Program, P.O. Box 7086, Pasadena, CA 91109-7086.

Kaiser Permanente ຈະທວນຄືນໃບສະໝັກທີ່ສົ່ງມາ ເມື່ອໃບສະໝັກນັ້ນສົມບູນ ແລະຈະພິຈາລະນາຕັດສິນວ່າທ່ານມີສິດໄດ້ຮັບຫຼືບໍ່ ໂດຍສອດຄ່ອງກັບນະໂຍບາຍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວຂອງ Kaiser Permanente. ໃບສະໝັກທີ່ບໍ່ຄົບຖ້ວນອາດສົ່ງຜົນໃຫ້ ເກີດຄວາມຫຼ້າຊ້າໃນການດຳເນີນການ ຫຼື ການປະຕິເສດໃບສະໝັກ MFA, ແຕ່ Kaiser Permanente ຈະແຈ້ງໃຫ້ຜູ້ສະໝັກຮູ້ ແລະໃຫ້ໂອກາດໃນການສົ່ງເອກະສານ ຫຼືຂໍ້ມູນທີ່ຂາດຫາຍໄປ, ພາຍໃນວັນທີທີ່ກຳນົດໄວ້.

©2018 Kaiser Foundation Hospital;
Kaiser Foundation Health Plan, Inc.